# ການຕອບໃສ່ແບບຟອມການສຳຫຼວດປະຊາກອນປີ 2010 ຂອງທ່ານແມ່ນປອດພັຍ, ແລະມັນມີຄວາມສຳຄັນສຳຫຼັບຊຸມຊົນຂອງທ່ານ.

**ຖາມ:** ເປັນຫຍັງການສຳຫຼວດປະຊາກອນປີ 2010 ຈຶ່ງມີຄວາມສຳຄັນ?

**ຕອບ:** ທຸກ 10 ປີ, ຣັຖະທຳມະນູນຂອງສະຫະຣັຖກຳນົດວ່າທຸກຄົນໃນສະຫະຣັຖອາເມລິກາຕ້ອງຖືກນັບ, ໂດຍບໍ່ຕ້ອງສົນໃຈເຖິງຄວາມເປັນມາດ້ານເຊື້ອຊາດ, ອາຍຸ ຫຼື ສະຖານະພາບວີຊ່າ. ຂໍ້ມູນຂອງທ່ານໃນແບບຟອມການສຳຫຼວດປະຊາກອນປີ 2010 ຂອງທ່ານນັ້ນຈະຖືກນຳໃຊ້ໂດຍຣັຖບານເພື່ອພິຈາລະນາວ່າຊຸມຊົນຂອງທ່ານ ຈະໄດ້ຮັບທຶນເທົ່າໃດຈາກຈຳນວນເງິນຫຼາຍກວ່າ 400 ຕື້ໂດລາທີ່ຢູ່ໃນກອງທຶນ ຣັຖບານກາງໃນແຕ່ລະປີ.

**ຖາມ:** ມີຜົນປະໂຫຍດແນວໃດແດ່ທີ່ຊຸມຊົນຂອງຂ້າພະເຈົ້າສາມາດໄດ້ຮັບ?

**ຕອບ:** ໂດຍການໃຊ້ເວລາປະມານ 10 ນາທີໃນການຕອບຄຳຖາມ 10 ຄຳຖາມງ່າຍໆ, ພວກເຮົາກໍຈະສາມາດຊ່ວຍເພີ່ມການຝຶກອົບຮົມດ້ານວຽກງານ, ປັບປຸງການສຶກສາ, ຊ່ວຍການບໍລິການສາທາລະນະ ແລະດຳເນີນການໃຫ້ບໍລິການດ້ານການແພດຫຼາຍຂຶ້ນ,ແລະການປັບປຸງອື່ນໆ.

**ຖາມ:** ຂ້າພະເຈົ້າຈະໝັ້ນໃຈໄດ້ແນວໃດວ່າ ຂໍ້ມູນຂອງຂ້າພະເຈົ້າປອດພັຍ?

**ຕອບ:** ຂໍ້ມູນທັງໝົດຂອງທ່ານເປັນຄວາມລັບ, ແລະກົດໝາຍຫ້າມບໍ່ໃຫ້ເປີດເຜີຍຂໍ້ມູນລັບນີ້ໃຫ້ແກ່ອົງການໃດໆ ຂອງລັດຖະບານ. ຄວາມຈິງແລ້ວ, ບໍ່ມີຂໍ້ມູນໃດຂອງທ່ານ ທີ່ຈະຖືກນຳໃຊ້ເພື່ອຕ້ານກັບທ່ານ, ແລະແບບຟອມການສຳຫຼວດປະຊາກອນປີ 2010 ນີ້ກໍບໍ່ໄດ້ຖາມເອົາແມ້ແຕ່ສະຖານະພາບວີຊ່າ, ສາສະໜາ ຫຼື ລາຍໄດ້ຂອງທ່ານ.

**ຖາມ:** ຈະເຮັດແນວໃດ ຖ້າຫາກ ວີຊ່າຂອງຂ້າພະເຈົ້າໝົດອາຍຸ, ຫຼື ຂ້າພະເຈົ້າເປັນ ຜູ້ອົບພະຍົບເຂົ້າເມືອງທີ່ຜິດກົດໝາຍ.

**ຕອບ:** ມັນບໍ່ສຳຄັນວ່າ ສະຖານະພາບການເປັນພົນລະເມືອງ ຫຼື ວີຊ່າຂອງທ່ານ ຈະເປັນແນວໃດ. ກົດໝາຍກຳນົດວ່າ ທຸກຄົນທີ່ອາໃສຢູ່ໃນສະຫະຣັຖໃນລະຫວ່າງທີ່ມີ ການສຳຫຼວດປະຊາກອນປີ 2010 ຈະຕ້ອງຖືກນັບ.

**ຖາມ:** ຈະເປັນແນວໃດ ຖ້າຫາກ ຂ້າພະເຈົ້າບໍ່ສົ່ງແບບຟອມການສຳຫຼວດປະຊາກອນປີ 2010 ຂອງຂ້າພະເຈົ້າກັບຄືນ?

**ຕອບ:** ຖ້າຫາກ ທ່ານບໍ່ສົ່ງແບບຟອມການສຳຫຼວດປະຊາກອນປີ 2010 ຂອງທ່ານ ກັບຄືນທາງໄປສະນີ, ພະນັກງານສຳຫວດປະຊາກອນທີ່ໃຈດີ ກໍຈະໄປຫາ ທ່ານຮອດເຮືອນເພື່ອເກັບກຳຂໍ້ມູນຂອງທ່ານ. ພະນັກງານສຳຫຼວດປະຊາກອນ ຈະຖືບັດປະຈຳຕົວທີ່ເປັນທາງການ, ໄດ້ສາບານຕົນວ່າຈະຮັກສາຄວາມລັບຂອງທ່ານ, ແລະຈະໄປຢ້ຽມຢາມເຮືອນຂອງທ່ານເລື້ອຍໆ ຈົນກວ່າທ່ານ ຈະຖືກນັບ.






ສຳຫຼັບຄຳແນະນຳວິທີການຊ່ວຍເຫຼືອເປັນ ພາສາລາວນັ້ນ, ກະຣຸນາເບິ່ງທີ່ເວັບໄຊ 2010census.gov

United States Census 2010

ສຳມະໂນຄົວຂອງ ສະຫະລັດອາເມຣິກາ

ມັນຢູ່ໃນຄວາມຮັບຜິດຊອບຂອງພວກເຮົາທຸກຄົນ

**ກະຣຸນາສົ່ງແບບຟອມການສຳຫຼວດປະຊາກອນຂອງທ່ານກັບຄືນມື້ນີ້.**

D-3312 (L)